ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC



ສາມອວຍພອນ
ວັນເດັກນ້ອຍສາກົນ
ແລະ ວັນປູກຕົ້ນໄມ້ແຫ່ງຊາດ

ເຖິງນ້ອງໆເດັກນ້ອຍ ແລະ ເຍົາວະຊົນທີ່ໜ້າຮັກທັງຫຼາຍ,

ເນື່ອງໃນໂອກາດວັນເດັກນ້ອຍສາກົນ ປີ 2026 ນີ້ ໃນນາມຄະນະຜູ້ບໍລິຫານ ແລະ ພະນັກງານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ທັງໝົດ ຂ້າພະເຈົ້າຮູ້ສຶກດີໃຈ ແລະ ພູມໃຈເປັນຢ່າງຍິ່ງ ທີ່ໄດ້ມີໂອກາດສົ່ງຄວາມຮັກຄວາມຫ່ວງໃຍ ແລະ ຄຳອວຍພອນອັນປະເສີດມາຍັງເດັກນ້ອຍ ແລະ ເຍົາວະຊົນລາວທົ່ວປະເທດ.

ທຄຕລ ໄດ້ຖືສຳຄັນຕໍ່ການປະກອບສ່ວນໃນການພັດທະນາເດັກນ້ອຍ ແລະ ເຍົາວະຊົນ ທີ່ຈະກາຍເປັນໜໍ່ແໜງ ເປັນອະນາຄົດທີ່ສຳຄັນຂອງປະເທດຊາດ.

ໃນໄລຍະຜ່ານມາ ທຄຕລ ໄດ້ສະໜັບສະໜູນການສ້າງ ແລະ ພັດທະນາໂຮງຮຽນໃນເຂດຫ່າງໄກສອກຫຼີກ ເພື່ອໃຫ້ເດັກນ້ອຍທຸກຄົນໄດ້ມີໂອກາດຮຽນໜັງສືຢ່າງທົ່ວເຖິງ. ພ້ອມດຽວກັນນັ້ນ ພວກເຮົາຍັງໄດ້ຮ່ວມສະໜັບສະໜູນໂຄງການແຂ່ງຂັນນັກຮຽນເກັ່ງລະດັບຊາດ ເພື່ອຊຸກຍູ້ຍ້ອງຍໍຊົມເຊີຍນ້ອງໆນັກຮຽນທີ່ມີ ຄວາມຮູ້ຄວາມສາມາດ ແລະ ຍັງໄດ້ສົ່ງເສີມໂຄງການຮັກສາສິ່ງແວດລ້ອມຫຼາຍໆໂຄງການ.

ພວກເຮົາເຊື່ອໝັ້ນວ່າ ການປູກຈິດສຳນຶກຮັກທຳມະຊາດ, ສິ່ງແວດລ້ອມ, ສັງຄົມ ແລະ ຄວາມຮູ້ທາງການເງິນທີ່ດີແຕ່ນ້ອຍ ຄືການລົງທຶນທີ່ຍືນຍົງ.

ພິເສດໃນວັນເດັກປີນີ້ ທຄຕລ ໄດ້ຈັດກິດຈະກຳທັດສະນະສຶກສາໃຫ້ນ້ອງນັກຮຽນ ໄດ້ມາສຳຜັດປະສົບການຕົວຈິງຂອງວຽກງານທະນາຄານ ແລະ ຮຽນຮູ້ໂລກການເງິນຍຸກໃໝ່ ພວກເຮົາຢາກໃຫ້ເດັກນ້ອຍທຸກຄົນກ້າຄິດ, ກ້າຝັນ, ກ້າຮຽນຮູ້ ແລະ ກ້າວໄປຂ້າງໜ້າຢ່າງໝັ້ນຄົງ ໃນຍຸກທີ່ໂລກກຳລັງເຂົ້າສູ່ຍຸກດິຈິຕອນຢ່າງເຕັມຮູບແບບ. ຂ້າພະເຈົ້າຂໍຢືນຢັນໃນໂອກາດນີ້ວ່າ ທຄຕລ ຈະພະຍາຍາມຮ່ວມສ້າງໂອກາດໃຫ້ເດັກນ້ອຍລາວທຸກຄົນ.

“ກ້າວທຳອິດ ຂອງການຮຽນຮູ້ ສູ່ໂລກ ການເງິນຍຸກໃໝ່”











ສຸດທ້າຍນີ້ ຂ້າພະເຈົ້າຂໍສົ່ງຄຳອວຍພອນມາຍັງເດັກນ້ອຍ ແລະ ເຍົາວະຊົນລາວທຸກຄົນ **“ຈົ່ງມີແຕ່ຄວາມສຸກ, ສຸຂະພາບແຂງແຮງ, ຕັ້ງໃຈສຶກສາຮ່ຳຮຽນໃຫ້ເກັ່ງ, ມີອະນາຄົດທີ່ສົດໃສ ແລະ ເຕີບໃຫຍ່ເປັນກຳລັງສຳຄັນໃນການພັດປະເທດຊາດ. ທຄຕລ ພ້ອມທີ່ຈະປະກອບສ່ວນກຳລັງແຮງສະໜັບສະໜູນໃຫ້ເດັກນ້ອຍ ແລະ ເຍົາວະຊົນສ້າງຄວາມຝັນໃຫ້ສຳເລັດ ແລະ ເຕີບໃຫຍ່ໃນສັງຄົມທີ່ດີ"**

ດ້ວຍຄວາມຮັກ ແລະ ຫ່ວງໃຍ
ທ່ານ ນາງ ສາຍສະໝອນ ຈັນທະຈັກ
ຜູ້ອຳນວຍການ